# ການເຂົ້າຮ່ວມຂອງປະຊາຊົນໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແບບຍືນຍົງຢູ່ເຂດສະຫງວນສິ່ງທີ່ມີຊີວິດ ທີ່ ແປຣກຕວນ ໃນປະເທດ ກຳປູເຈັຽ

## ຈຸດປະສົງ

**ຫົວຂໍ້ຂອງການເຝິກອົບຮົມ ETP:**

- ແນວຄວາມຄິດ ແລະ ຜົນປະໂຍດ ຂອງການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບປະສົມປະສານ (IREM).
- ອຸປະສັກຂອງ IREM.
- ເຄື່ອງມືດ້ານນະໂຍບາຍສຳລັບ IREM.
- ເຄື່ອງມືສຳລັບການຈັດຕັ້ງປະຕິບັດ IREM.
- ການພັດທະນາ IREM ທີ່ມີປະສິດທິພາບ ໃນອ່າງແມ່ນ້ຳຂອງ.
- ການພັດທະນາແບບຍືນຍົງ ແລະ ການສ້າງຈິດສຳນຶກຕໍ່ສິ່ງແວດລ້ອມ.

ກໍຣະນີສຶກສາທີ່ກ່າວນີ້ ໄດ້ຊອກຮູ້ເຖິງ ການລິເລີ່ມ ກ່ຽວກັບການພັດທະນາແບບຍືນຍົງ ຂອງລັດຖະບານປະເທດກຳປູເຈັຽ ແລະ ຂອງບັນດາຜູ້ໃຫ້ທຶນ ເພື່ອປົກປັກຮັກສາສະພາບຖິ່ນອາໃສໃນດິນທາມ ທີ່ຫຼໍ່ແຫຼມ ໃນເຂດຕົງເລສາບ ປະເທດກຳປູເຈັຽ. ໃນນີ້, ຈະໄດ້ຍົກໃຫ້ເຫັນເຖິງບັນດາຄວາມພະຍາຍາມຕ່າງໆ ຂອງລັດຖະບານ ແລະ ຜູ້ໃຫ້ທຶນ ໃນການພັດທະນາ ແລະ ການຈັດຕັ້ງປະຕິບັດ ຍຸດທະສາດການຄຸ້ມຄອງແບບປະສົມປະສານ ເພື່ອສະໜັບສະໜູນ ການສ້າງຕັ້ງເຂດສະຫງວນສິ່ງທີ່ມີຊີວິດຂອງອົງການຢູແນສໂກ (UNESCO Boisphere Reserve) ສຳລັບປົກປັກຮັກສາ ຖິ່ນອາໃສຂອງນົກ ທີ່ມີຄວາມສຳຄັນໃນລະດັບສາກົນ ທີ່ ແປຣກຕວນ (Prek Toal) ໃນເຂດ ຕົງເລສາບ. ພ້ອມນີ້ ກໍຈະໄດ້ ເນັ້ນໜັກເປັນພິເສດ ເຖິງຂະບວນການສົ່ງເສີມວຽກງານອະນຸລັກ ທີ່ມີການຄຸ້ມຄອງແບບມີສ່ວນຮ່ວມຂອງປະຊາຊົນ, ການສ້າງຈິດສຳນຶກ ແລະ ການສຶກສາອົບຮົມ. ນອກຈາກນີ້, ກໍຈະໄດ້ນຳເອົາ ບັນດາອຸປະສັກທາງດ້ານການຈັດຕັ້ງ ແລະ ລະບຽບການ ທີ່ເປັນບັນຫາຕໍ່ການຈັດຕັ້ງປະຕິບັດ ພ້ອມດ້ວຍ ວິທີທາງໃນການແກ້ໄຂ ຂຶ້ນມາວິນິດໃສ ເຊັ່ນກັນ.

## ປະເດັນ

ກໍລະນີສຶກສາຄັ້ງນີ້ ໄດ້ຊີ້ໃຫ້ເຫັນບັນດາປະເດັນທີ່ສຳຄັນຫຼັກໆ ດັ່ງນີ້:

1. ການປົກປັກຮັກສາ, ການອະນຸລັກ ແລະ ການຄຸ້ມຄອງ ຊັບພະຍາກອນທຳມະຊາດ ທີ່ຈະເຮັດໃຫ້ສາມາດນຳໃຊ້ຊັບພະຍາກອນໄດ້ຍາວນານ ແລະ ສາມາດສືບທອດໄປຍັງລູກຫຼານຕໍ່ໄປໄດ້.
2. ການຂັດແຍ່ງໃນການນຳໃຊ້ຊັບພະຍາກອນ ທີ່ເປັນສາເຫດມາຈາກຄວາມຕ້ອງການນຳໃຊ້ຊັບພະຍາກອນອັນດຽວ ເພື່ອຫຼາຍຈຸດປະສົງ.
3. ແນວທາງຂອງທ້ອງຖິ່ນ ໃນການພັດທະນາແບບຍືນຍົງ ເພື່ອຮັບປະກັນໃຫ້ ຊັບພະຍາກອນທຳມະຊາດ ໄດ້ມີການຄຸ້ມຄອງທີ່ດີ ໃນລະດັບທ້ອງຖິ່ນ.
4. ການປັບປຸງລະບຽບການ ແລະ ທິດທາງ ນະໂຍບາຍຕ່າງໆ ເພື່ອສະໜັບສະໜູນ ບັນດາ ຂະບວນການລິເລີ່ມດ້ານການຄຸ້ມຄອງແບບຍືນຍົງ.
5. ການຖືເອົາວຽກການຄົ້ນຄວ້າ ເປັນສິ່ງຫລຸດຜ່ອນຊ່ອງຫວ່າງ ດ້ານຄວາມຮູ້ ເພື່ອໃຫ້ ສາມາດຮຽນຮູ້ ແລະເຂົ້າໃຈໄດ້ແຈ້ງຂຶ້ນ ເຖິງໜ້າທີ່ ແລະ ຄວາມໝັ້ນຄົງ ຂອງລະບົບນິເວດ ທັງເພື່ອເປັນບ່ອນອີງໃຫ້ແກ່ການກຳນົດຍຸດທະສາດ ການຄຸ້ມຄອງຊັບພະຍາກອນທຳມະຊາດ.

## ວັດຖຸປະສົງຂອງການຮຽນຮູ້

ພາຍຫຼັງສໍາເລັດການຮຽນຮູ້ກ່ຽວກັບກໍລະນີສຶກສາ ນີ້ແລ້ວ ບັນດາຜູ້ເຂົ້າຮ່ວມອົບຮົມ ຈະສາມາດ:

- ກໍານົດໄດ້ບັນດາຊະນິດພັນທີ່ຖືກຄຸກຄາມ ທັງ ອະທິບາຍໄດ້ເຖິງລັກສະນະຂອງໄພຂົ່ມຂູ່.
- ຮັບຮູ້ໄດ້ບັນດາຂໍ້ຂັດແຍ່ງສະເພາະແຕ່ລະດ້ານໃນການນໍາໃຊ້ຊັບພະຍາກອນ ແລະ ກໍຮັບຮູ້ໄດ້ບັນດາເຫດການຕົວຈິງທີ່ກໍ່ໃຫ້ເກີດມີການຄຸ້ມຄອງຊັບພະຍາກອນແບບບໍ່ຍືນນານ.
- ແນະນໍາ ກ່ຽວກັບການກໍານົດນະໂຍບາຍ ທີ່ສະທ້ອນໃຫ້ເຫັນເຖິງບັນຫາຂໍ້ຂັດແຍ່ງໃນການນໍາໃຊ້ຊັບພະຍາກອນ.
- ສົນທະນາ ປຶກສາຫາລື ກໍານົດບົດບາດຂອງປະຊາຊົນ ໃນຂະບວນການຄຸ້ມຄອງຊັບພະຍາກອນທໍາມະຊາດ ແບບຍືນຍົງ.
- ສາມາດຍົກຕົວຢ່າງຂອງອຸປະສັກ ຫຼື ສິ່ງກີດກັ້ນຕ່າງໆ ດ້ານການຈັດຕັ້ງ ແລະ ລະບຽບການ ຕໍ່ການຄຸ້ມຄອງຊັບພະຍາກອນແບບຍືນຍົງ.
- ສົນທະນາ/ວິຈານ ກ່ຽວກັບຂໍ້ຈໍາກັດໃນຄວາມພະຍາຍາມຂອງລັດຖະບານກໍາປູເຈັຽ ສໍາລັບການສ້າງຕັ້ງ ເຂດສະຫງວນສິ່ງທີ່ມີຊີວິດ ທີ່ ແປຣກຕວນ ພ້ອມດ້ວຍບົດບາດຂອງປະເທດອື່ນໆ.

## ສັງລວມໂຄງການໂດຍຫຍໍ້

### *ພາກສະເໜີ ແລະ ຄວາມເປັນມາ*

ພື້ນທີ່ທາງທິດຕາເວັນຕົກສ່ຽງເໜືອຂອງຕົງເລສາບ ຫຼື ມີຊື່ວ່າ ແປແຣກ ຕວນ ເປັນພື້ນທີ່ສໍາຄັນທີ່ສຸດສໍາລັບການປະສົມພັນຂອງຈໍາພວກນົກທີ່ກໍາລັງຈະສູນພັນໃນຂົງເຂດອາຊີອາຄະເນ. ພື້ນທີ່ດັ່ງກ່າວ ໄດ້ເປັນທີ່ພັກພາອາໃສຂອງປະຊາກອນນົກຂອງໂລກທີ່ໄດ້ຖືກຄຸກຄາມ ຫຼື ກໍາລັງຖືກຄຸກຄາມ ເຖິງ 10 ຊະນິດ ເຊິ່ງລວມມີ ນົກຕະກຸມໃຫຍ່ (Greater adjutant), ນົກກະທຸງ (Spot-billed pelican), Oriental darter, ນົກກະສາ (Painted stork) ແລະ ນົກຊ້ອນ (Black-headed ibis). ສະນັ້ນ, ໃນປີ 1997 ພື້ນທີ່ດັ່ງກ່າວຈຶ່ງໄດ້ກາຍເປັນເຂດຫວງຫ້າມ ຂອງເຂດສະຫງວນສິ່ງທີ່ມີຊີວິດໃນຕົງເລສາບ (ຮູບ 1 ແລະ ຮູບ 2).

ພ້ອມນີ້, ຊັບພະຍາກອນທີ່ອຸດົມຮັ່ງມີຂອງຕົງເລສາບແຫ່ງນີ້ ຍັງໄດ້ເປັນສິ່ງຊຸບລ້ຽງ ການດໍາລົງຊີວິດຂອງຄົນອີກຫຼາຍສົມຄວນ ເຊິ່ງສ່ວນໃຫຍ່ໄດ້ເຂົ້າມາຕັ້ງຖິ່ນຖານຕາມພື້ນທີ່ບ່ອນທີ່ມີນໍ້າຖ້ວມ ໂດຍຍຶດເອົາການຫາປາເປັນອາຊີບຫຼັກມາໄດ້ຫຼາຍຮ້ອຍປີແລ້ວ ແລະ ອາຊີບການຫາປາດັ່ງກ່າວກໍຍັງຄົງຕົວເປັນອາຊີບຫຼັກ ໃນການສ້າງລາຍຮັບໃຫ້ກັບຄົນທີ່ນີ້ມາໂດຍຕະຫລອດ.

ການຄຸ້ມຄອງ ເຂດສະຫງວນສິ່ງທີ່ມີຊີວິດໃນຕົງເລສາບ ເປັນຄວາມຮັບຜິດຊອບຮ່ວມກັນ ລະຫວ່າງກະຊວງສິ່ງແວດລ້ອມ ແລະ ກະຊວງ ກະສິກໍາ, ປ່າໄມ້ ແລະ ການປະມົງ. ໃນນີ້, ສິ່ງທີ່ເຫັນວ່າເປັນທີ່ໜ້າສົນໃຈ ກໍຄື ການຊໍ້າຊ້ອນ/ເລື່ອມກັນໃນຈຸດປະສົງການຄຸ້ມຄອງ ຂອງສອງກະຊວງທີ່ກ່າວ. ກະຊວງສິ່ງແວດລ້ອມ ມີຈຸດປະສົງເລັ່ງໃສ່ການປົກປັກຮັກສາ, ການອະນຸລັກ ແລະ ການຄຸ້ມຄອງ ຊັບພະຍາກອນທໍາມະຊາດ ເພື່ອການນໍາໃຊ້ ແລະ ການພັດທະນາແບບຍືນຍົງ ແລະ ສາມາດສືບທອດໄປຍັງລູກຫຼານຕໍ່ໆໄປ, ສ່ວນ ກະຊວງກະສິກໍາ ແມ່ນເລັ່ງໃສ່ການຄຸ້ມຄອງຈັດສັນການຫາປາ ແລະ ການຍົກປະລິມານຜົນຜະລິດຂອງການຈັບປາ ໃນແຕ່ລະເຂດສໍາປະທານ ຂອງຜູ້ສໍາປະທານຫາປາແຕ່ລະຄົນ.

ການລິເລີ່ມຂອງກະຊວງສິ່ງແວດລ້ອມ ເພື່ອເຮັດຫຼ້ອນໜ້າທີ່ພາລະບົດບາດໃນການຄຸ້ມຄອງ ສ່ວນໃຫຍ່ ແມ່ນການສຸມໃສ່ການສ້າງໜ່ວຍງານຮ່ວມມືທາງວິຊາການຂອງຕົນຂຶ້ນໃນປີ 1995 ເພື່ອສ້າງຕັ້ງໃຫ້ມີເຂດສະຫງວນສິ່ງທີ່ມີຊີວິດໃນຕົງເລສາບຂຶ້ນ. ໜ່ວຍງານດັ່ງກ່າວ ໄດ້ຮັບການສະໜັບສະໜູນ ຈາກອົງການ ຢູແນສໂກ ແລະ ບັນດາປະເທດສະຫະ

ພາບເອີຣົບ ແລະ ໃນຊ່ວງມໍ່ໆມານີ້ກໍໄດ້ກາຍມາເປັນກອງເລຂາທິການ ຂອງຄະນະກໍາມະການແມ່ນໍ້າຂອງແຫ່ງຊາດກໍາປູເຈຍ. ເປົ້າໝາຍຕົ້ນຕໍຂອງໜ່ວຍງານຮ່ວມມືທາງວິຊາການນີ້ ແມ່ນດໍາເນີນການຄົ້ນຄວ້າເພື່ອໃຫ້ຮູ້ ແລະ ເຂົ້າໃຈໄດ້ດີຂຶ້ນເຖິງສະພາບຂອງຊັບພະຍາກອນຕ່າງໆທີ່ສໍາຄັນ ແລະ ຫຼໍ່ແຫຼມ ທີ່ມີໃນເຂດສະຫງວນສິ່ງທີ່ມີຊີວິດ ທີ່ແປຣກຕວນ ແລະກໍເພື່ອສຶກສາອົບຮົມ ປະຊາຊົນທ້ອງຖິ່ນ ລວມທັງ ບັນດານັກທ່ອງທ່ຽວ ທີ່ມາຢ້ຽມຢາມເຂດສະຫງວນ ກ່ຽວກັບ ການປະຕິບັດການຕ່າງໆ ໃນການຄຸ້ມຄອງ ແລະ ອະນຸລັກແບບຍືນຍົງ.

ບັນດາກິດຈະກໍາທີ່ທາງໜ່ວຍງານດັ່ງກ່າວໄດ້ດໍາເນີນມາຈົນເຖິງປະຈຸບັນນີ້ ລວມມີ:

- ສ້າງສະຖານີຄົ້ນຄວ້າຂຶ້ນໃນເຂດສະຫງວນ.
- ໄດ້ສໍາເລັດການສໍາຫຼວດນົກ.
- ໄດ້ດໍາເນີນການໂຄສະນາ ອົບຮົມໃຫ້ຊາວບ້ານໃນພື້ນທີ່.
- ໄດ້ສ້າງລາຍການສໍາລັບນັກທ່ອງທ່ຽວ ແລະ ສ້າງປຶ້ມນໍາທ່ຽວເພື່ອແນະນໍານັກທ່ອງທ່ຽວ ເພື່ອບໍ່ໃຫ້ການທ່ຽວຊົມເປັນການລົບກວນສັດ.
- ໄດ້ຮ່າງແຜນຄຸ້ມຄອງສິ່ງແວດລ້ອມ.
- ໄດ້ເອົາໃຈໃສ່ປຶກສາຫາລື ແລະ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຕ່າງໆ ໂດຍສະເພາະກໍແມ່ນ ກົມປະມົງ ແລະ ຜູ້ສໍາປະທານການຫາປາທັງຫຼາຍ ເພື່ອແກ້ໄຂຂໍ້ຂັດແຍ່ງໃນການນໍາໃຊ້ຊັບພະຍາກອນ.

## *ແນວທາງໃນການຄຸ້ມຄອງເຂດສະຫງວນສິ່ງທີ່ມີຊີວິດ ແປຣກ ຕວນ*

ໃນພາກນີ້ຈະໄດ້ອະທິບາຍລະອຽດເຖິງແນວທາງທີ່ນໍາໃຊ້ ສໍາລັບການຄຸ້ມຄອງເຂດສະຫງວນ ແປຣກ ຕວນ ໂດຍສະເພາະ ໄດ້ເນັ້ນໃສ່ອະທິບາຍ ເຖິງລັກສະນະການເກາະເນື່ອງກັນຂອງອົງປະກອບວຽກງານຕ່າງໆ ທີ່ທາງໜ່ວຍງານຮ່ວມມືທາງວິຊາການໄດ້ດໍາເນີນການ ເພື່ອໃຫ້ການຄຸ້ມຄອງເຂດສະຫງວນໃນໄລຍະຍາວ ມີຜົນສໍາເລັດ ແລະ ເພື່ອຊຸກຍູ້ໃຫ້ມີການປົກປັກຮັກສາ ຕົງເລສາບຫຼາຍຂຶ້ນ ດ້ວຍການປະກາດເປັນເຂດມໍລະດົກໂລກ ແລະ ການຈັດເປັນເຂດອະນຸລັກໃນບັນຊີ ຂອງ ສົນທິສັນຍາຣາມຊາຣ໌ (RAMSAR).

### *ບາດກ້າວ ທີ 1: ການສ້າງຍຸດທະສາດການຄຸ້ມຄອງແບບປະສົມປະສານ*

ບັນດາໜ້າວຽກທີ່ສໍາເລັດ ໃນຂະບວນການສ້າງຍຸດທະສາດແບບປະສົມປະສານ ສໍາລັບເຂດສະຫງວນ ລວມມີ:

- ການປະເມີນບັນດາໂຄງການທີ່ກໍາລັງດໍາເນີນຢູ່ ແລະ ໂຄງການທີ່ໄດ້ວາງແຜນໄວ້ ຂອງບັນດາອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGO), ຂອງບັນດາຜູ້ໃຫ້ທຶນຕ່າງໆ ແລະ ຂອງຂະແໜງການຕ່າງໆໃນພາກລັດ ໃນເຂດອ້ອມຮອບຕົງເລສາບ ເພື່ອໃຫ້ກໍານົດໄດ້ວ່າ ເປົ້າໝາຍ ແລະ ຈຸດປະສົງຂອງໂຄງການເຫຼົ່ານັ້ນ ກົມກຽວ ສະໜັບສະໜູນຊຶ່ງກັນແລະກັນ ຫຼື ບໍ່.
- ລວບລວມ ບັນດາຂໍ້ມູນດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ທີ່ມີສ່ວນກ່ຽວພັນກັບກິດຈະກໍາຂອງຄົນທີ່ອາໃສຢູ່ໃນເຂດຕົງເລສາບ.
- ກໍານົດປະເດັນ ແລະ ບັນຫາ ກ່ຽວກັບການນໍາໃຊ້ຊັບພະຍາກອນ ໃນສ່ວນຕ່າງໆ ຂອງເຂດສະຫງວນ.
- ກໍານົດມາດຕະຖານ ສໍາລັບປະເມີນຄວາມຍືນຍົງ ທາງດ້ານສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ ພ້ອມດ້ວຍການປະເມີນຄຸນຄ່າທາງເສດຖະກິດຂອງຊັບພະຍາກອນດິນທາມທີ່ຫຼໍ່ແຫຼມ ໃນເຂດສະຫງວນ.
- ວິເຄາະລະບົບການຈັດຕັ້ງ ແລະ ບັນດາລະບຽບກົດໝາຍ ສໍາລັບການຄຸ້ມຄອງເຂດສະຫງວນ ເພື່ອເປັນ ພື້ນຖານສໍາລັບກໍານົດຫາຂໍ້ແນະນໍາທີ່ຈະເຮັດໃຫ້ເກີດມີຄວາມຍືນຍົງທາງດ້ານສະຖາບັນ.

- ສະເໜີແຜນຍຸດທະສາດການຄຸ້ມຄອງແບບປະສົມປະສານ ສໍາລັບເຂດສະຫງວນ ພ້ອມດ້ວຍບັນດາກົນໄກສໍາລັບການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາ.
- ກວດສອບເບິ່ງກາລະໂອກາດ ສໍາລັບເສີມຂະຫຍາຍການຮ່ວມມືກັນລະຫວ່າງຂະແໜງການຕ່າງໆຂອງພາກລັດໃນລະດັບຊາດ ແລະ ລະຫວ່າງບັນດາຜູ້ໃຫ້ທຶນ ໃນລະດັບສາກົນ.
- ກໍານົດຫາກົນໄກ ທີ່ຈະສ້າງໃຫ້ເກີດການມີສ່ວນຮ່ວມ ຂອງມວນຊົນໃນການຄຸ້ມຄອງ ແລະ ໃນຂະບວນການຕັດສິນໃຈ.
- ສ້າງຈິດສໍານຶກ ດ້ວຍການເຜີຍແຜ່ຂໍ້ມູນຂ່າວສານ ແລະ ການສຶກສາອົບຮົມ ໃຫ້ຮູ້ກ່ຽວກັບປະເດັນ, ສິດທິ, ແລະບັນດາກົມກອງຂອງລັດທີ່ມີສ່ວນ ຮັບຜິດຊອບ ແລະ ມີບົດບາດໃນການປົກປັກຮັກສາ ຕົ່ງເລສາບທັງໝົດ.

*ບາດກ້າວ ທີ 2: ການຊຸກຍູ້ສົ່ງເສີມການປະສານງານ ແລະ ການເຮັດວຽກເປັນເຄືອຂ່າຍ:*

ເພື່ອປັບປຸງ ດ້ານພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບທີ່ຊໍ້າຊ້ອນກັນ ຂອງບັນດາໜ່ວຍງານທີ່ກ່ຽວຂ້ອງທັງໝົດ ໃຫ້ດີຂຶ້ນ ໄດ້ມີການນໍາໃຊ້ມາດຕະການດັ່ງຕໍ່ໄປນີ້:

- ລິເລີ່ມການປຶກສາຫາລືກັບພາກສ່ວນທີ່ມີສ່ວນກ່ຽວຂ້ອງກັນທັງຫຼາຍ, ບັນດາຕົວແທນຂອງປະຊາຊົນ, ແລະ ບັນດາຊ່ຽວຊານ ທີ່ອາໃສ ຫຼື ປະຕິບັດງານຢູ່ໃນເຂດຕົ່ງເລສາບທັງໝົດ.
- ປະສານງານກັບບັນດາຂະແໜງການຂອງລັດ ແລະ ອົງການຈັດຕັ້ງອື່ນໆ ເພື່ອດໍາເນີນການຄົ້ນຄວ້າທົດລອງຮ່ວມກັນເພື່ອເຮັດໃຫ້ການເກັບກໍາ ລວບລວມ ຂໍ້ມູນ ມີຄວາມສະດວກ.
- ສ້າງໃຫ້ມີເວທີ ສໍາລັບການໃຫ້ຄໍາປຶກສາ ແກ່ສາທາລະນະ ກ່ຽວກັບປະເດັນດ້ານສະພາບແວດລ້ອມ ແລະ ເສດຖະກິດ ແລະ ສໍາລັບການທົບທວນ, ປະເມີນ ແຜນສະເໜີໂຄງການ.
- ສ້າງກົນໄກ ສໍາລັບປັບປຸງ ລະບົບການແລກປ່ຽນຂໍ້ມູນ ຂ່າວສານ ລະຫວ່າງ ພາກເອກະຊົນ, ພາກລັດ ແລະ ກຸ່ມຜູ້ຕັດສິນບັນຫາ.
- ຊຸກຍູ້ ສົ່ງເສີມ ການປະສານງານທີ່ດີ ລະຫວ່າງໂຄງການສາກົນຕ່າງໆ.
- ຊຸກຍູ້ ສົ່ງເສີມ ໃຫ້ມີການພົວພັນກັນລະຫວ່າງຂະແໜງການຕ່າງໆໃນພາກລັດ ໂດຍການເສີມຂະຫຍາຍ ການປະສານງານ ແລະ ເຄືອຂ່າຍ ລະຫວ່າງກະຊວງ.
- ແຈກຢາຍບົດລາຍງານຄວາມຄືບໜ້າ ແລະ ຜົນສໍາເລັດ ໃຫ້ແກ່ຜູ້ຊົມໃຊ້ທຸກພາກສ່ວນຢ່າງປົກກະຕິ ໂດຍທາງ ອີເມນ, ອິນເຕີແນັດ, ແລະ ວິທີແຈກເປັນເອກະສານ.

*ບາດກ້າວ ທີ 3: ສ້າງຖານຂໍ້ມູນ ແລະ ລະບົບການຄຸ້ມຄອງຂໍ້ມູນຂ່າວສານ*

ບັນດາກິດຈະກໍາ ທີ່ກ່ຽວພັນກັບການສ້າງຖານຂໍ້ມູນ ແລະ ລະບົບການຄຸ້ມຄອງ ຂໍ້ມູນຂ່າວສານ ເຊິ່ງໄດ້ດໍາເນີນ ລວມມີ:

- ສ້າງຖານຂໍ້ມູນ ແລະ ລະບົບ GIS ເພື່ອໃຫ້ການເກັບກໍາສະສົມ ແລະ ວິເຄາະຂໍ້ມູນໄດ້ສະດວກ.
- ສ້າງຫ້ອງສະໝຸດສໍາລັບນັກຄົ້ນຄວ້າ.
- ຂຶ້ນທະບຽນ ບັນດາເອກະສານທີ່ມີທັງໝົດ ແລະ ສ້າງແຜນສໍາລັບການເກັບກໍາລວບລວມ ບັນດາບົດລາຍງານການຄົ້ນຄວ້າທີ່ກໍາລັງດໍາເນີນຢູ່ໃນເຂດຕົ່ງເລສາບທັງໝົດ.

*ບາດກ້າວ ທີ 4: ຈັດຕັ້ງຄະນະກໍາມະການຄຸ້ມຄອງການທ່ອງທ່ຽວທໍາມະຊາດ*

ກິດຈະກໍາໃຫຍ່ ທີ່ດໍາເນີນໂດຍໜ່ວຍງານຮ່ວມມືທາງວິຊາການ ກໍຄື ການຈັດຕັ້ງຄະນະກໍາມະການທ່ອງທ່ຽວທໍາມະຊາດຂຶ້ນ ຢູ່ພາຍໃນ ກະຊວງສິ່ງແວດລ້ອມ. ການສົ່ງເສີມດ້ານການທ່ອງທ່ຽວທໍາມະຊາດໃນທໍານອງນີ້ ຄາດວ່າຈະສ້າງໃຫ້ເກີດປະໂຫຍດຫຼາຍຢ່າງ ລວມທັງ ການສ້າງລາຍຮັບໃຫ້ແກ່ປະຊາຊົນທ້ອງຖິ່ນ ແລະ ນັກຄົ້ນຄວ້າ ອັນຈະເປັນສິ່ງຮັບ

ປະກັນໃຫ້ເກີດມີ ຄວາມຍືນຍົງທາງດ້ານເສດຖະກິດໄດ້ ແກ່ເຂດສະຫງວນ. ຜົນສໍາເລັດຂອງກິດຈະກໍາດັ່ງກ່າວ ໂດຍທົ່ວໄປແລ້ວ ຈະຂຶ້ນກັບປະສິດທິພາບໃນການດໍາເນີນການປະຕິຮູບລະບົບຫຼາຍໆຢ່າງ ໂດຍໜ່ວຍງານຮ່ວມມືທາງວິຊາການດັ່ງທີ່ໄດ້ກ່າວໄປແລ້ວ.

ກິດຈະກໍາການທ່ອງທ່ຽວທໍາມະຊາດ ຂະໜາດກາງ ແລະ ຂະໜາດນ້ອຍ ຄາດວ່າຈະສາມາດເລີ້ມຕົ້ນດໍາເນີນການໄດ້ໃນອານາຄົດອັນໃກ້ໆນີ້. ໃນຊ່ວງການກະກຽມເປີດການທ່ອງທ່ຽວນີ້ ກໍຈະໄດ້ມີການຈັດຕັ້ງຄະນະກໍາມະການຂັ້ນບ້ານຂຶ້ນ ຊຶ່ງລວມມີທຸກພາກສ່ວນເຂົ້າຮ່ວມ (ເຊັ່ນ: ນາຍບ້ານ, ເຈົ້າຂອງສໍາປະທານບ່ອນຫາປາ, ທີມງານອະນຸລັກ, ອະດີດນັກລ່ານົກ) ເພື່ອປຶກສາຫາລືກັນລະອຽດກ່ຽວກັບປະເດັນຕ່າງໆ ເຊັ່ນ ຈະກໍານົດເອົາສະຖານທີ່ໃດ ສໍາລັບໃຫ້ນັກທ່ອງທ່ຽວຢ້ຽມຢາມ (ເຊັ່ນ ການເບິ່ງນົກໃນເຂດສະຫງວນ, ຟາມແຂ້ ແລະ ການຫາປາເຊີງການຄ້າ ໃນເຂດອ້ອມແອ້ມໝູ່ບ້ານ); ຄ່າທໍານຽມສໍາລັບເຂົ້າມາທ່ອງທ່ຽວ; ຈໍານວນຜູ້ທີ່ຈະນໍາພາທ່ຽວ ແລະ ເຮືອນໍາທ່ຽວ, ສະຖານທີ່ພັກ ແລະ ຮ້ານອາຫານ. ໃນການກະກຽມວຽກງານທີ່ກ່າວນີ້ ຍັງຈະໄດ້ເອົາໃຈໃສ່ເປັນພິເສດອີກຕື່ມ ໃນດ້ານການສອນໃຫ້ຊາວບ້ານ ເປັນຜູ້ນໍາພາທ່ຽວເອງ ເພື່ອໃຫ້ໄດ້ຜົນປະໂຫຍດໂດຍກົງຈາກຜູ້ທີ່ເຂົ້າທ່ອງທ່ຽວເຂດສະຫງວນ ໂດຍໃນນີ້ ຄະນະກໍາມະການຈະໄດ້ຈັດຫາຄູສອນພາສາອັງກິດ ມາສອນໃຫ້ຊາວບ້ານແບບບໍ່ຄິດຄ່າ ເພາະຍັງບໍ່ທັນມີຊາວບ້ານຜູ້ໃດສາມາດເວົ້າພາສາອັງກິດໄດ້.

ຄະນະກໍາມະການທ່ອງທ່ຽວທໍາມະຊາດຂອງໜ່ວຍງານຮ່ວມມືທາງວິຊາການ ເຫັນໄດ້ວ່າການກະກຽມລ່ວງໜ້າເປັນສິ່ງສໍາຄັນ ທີ່ຈະຮັບປະກັນໃຫ້ກິດຈະການທ່ອງທ່ຽວທໍາມະຊາດ ມີຄວາມຍືນນານ ເຊິ່ງສະແດງອອກ ໃນຂໍ້ສະເໜີແນະ ຂອງເຂົາເຈົ້າທີ່ວ່າ: "ຢ່າງນ້ອຍສຸດ ໃນປີທໍາອິດນັ້ນ ຈະບໍ່ມີການອະນຸຍາດໃຫ້ນັກທ່ອງທ່ຽວ ເຂົ້າມາໃນເຂດທ່ຽວຊົມ ເພາະອາດຈະເປັນການລົບກວນ ເຂດການປະສົມພັນຂອງນົກໄດ້. ແຕ່ໃນຂະນະດຽວກັນນັ້ນ ກໍຈະອະນຸຍາດໃຫ້ ມີການທ່ຽວຊົມເບິ່ງນົກໄດ້ ໃນແຕ່ສະເພາະເຂດທີ່ຢູ່ລຽບສາຍນໍ້າ ເຊິ່ງເຂດທີ່ສາມາດເຂົ້າເຖິງໄດ້ສະດວກກວ່າໝູ່ ກໍແມ່ນເຂດແປຣກດາ ທີ່ສາມາດເຂົ້າເຖິງໄດ້ດ້ວຍເຮືອຈັກ ຫຼື ເຮືອພາຍ". ຖ້າຫາກວ່າທຸກຄົນເຄົາລົບຕໍ່ລະບຽບງ່າຍໆ ລັກສະນະນີ້ໄດ້ ກໍຈະເຮັດໃຫ້ຜົນກະທົບຕໍ່ປະຊາກອນນົກ ຫຼຸດນ້ອຍລົງໄດ້. ພ້ອມນີ້ ທາງຄະນະກໍາມະການ ຍັງວາງແຜນທີ່ຈະຜລິດເອກະສານທີ່ຍົກໃຫ້ເຫັນເຖິງ ເປົ້າໝາຍການອະນຸລັກ ແລະ ຍຸດທະສາດການຄຸ້ມຄອງ ລວມທັງການໃຫ້ລາຍລະອຽດກ່ຽວກັບນົກທີ່ມັກພົບເຫັນ ໃນເຂດສະຫງວນ ຈໍາໜ່າຍໃຫ້ແກ່ນັກທ່ອງທ່ຽວ ເພື່ອສ້າງລາຍຮັບ ສໍາລັບເປັນທຶນດໍາເນີນງານຂອງເຂົາເຈົ້າໃນການບໍລິຫານໂຄງການອະນຸລັກ.

ນອກຈາກການວາງແຜນກ່ຽວກັບການຈັດແຈງຕ່າງໆທີ່ກ່າວມາແລ້ວ, ທາງຄະນະກໍາມະການກໍຍັງໄດ້ ສຶກສາອີກຕື່ມວ່າຈະນໍາໃຊ້ເງິນລາຍຮັບທີ່ຈະໄດ້ມາຈາກການເກັບຄ່າທໍານຽມຈາກນັກທ່ອງທ່ຽວນັ້ນແນວໃດ ຈຶ່ງຈະດີທີ່ສຸດ. ຕໍ່ບັນຫານີ້ ທາງຄະນະກໍາມະການ ເຫັນວ່າ ບໍ່ມີວິທີທາງໃດທີ່ຈະດີໄປກວ່າການນໍາໃຊ້ເຂົ້າໃນການປັບປຸງຊີວິດການເປັນຢູ່ຂອງຊາວບ້ານ ຈຶ່ງໄດ້ພະຍາຍາມເຮັດທຸກວິທີທາງ ເພື່ອໃຫ້ເງິນທີ່ໄດ້ນັ້ນ ໄດ້ກັບໄປຮັບໃຊ້ກິດຈະກໍາພັດທະບ້ານ. ສະນັ້ນ, ຈຶ່ງໄດ້ມີການຈັດລຽງບຸລິມະສິດ ກ່ຽວກັບຄວາມຕ້ອງການທາງດ້ານການພັດທະນາຢູ່ໃນທ້ອງຖິ່ນ (ເຊັ່ນ: ການປ່ອຍສິນເຊື່ອ, ການສຶກສາ). ສໍາລັບການກໍານົດການແບ່ງປັນ ແລະ ແຈກຢາຍລາຍຮັບທີ່ໄດ້ຈາກການທ່ອງທ່ຽວທໍາມະຊາດນັ້ນ ທາງຄະນະກໍາມະການໄດ້ໃຫ້ຄວາມສໍາຄັນເປັນພິເສດ ແກ່ກຸ່ມຊາວບ້ານຜູ້ທີ່ທຸກຍາກກວ່າໝູ່, ກຸ່ມຜູ້ທີ່ເປັນນັກລ່ານົກມາກ່ອນ, ກຸ່ມຊາວບ້ານທີ່ອາໃສການນໍາໃຊ້ຊັບພະຍາກອນທໍາມະຊາດແບບບໍ່ຍືນຍົງເພື່ອລ້ຽງຊີບ ເພາະການແຈກຢາຍລາຍຮັບໃນວິທີທາງນີ້ ນອກຈາກຈະເປັນການສຶກສາອົບຮົມ ແລະ ສ້າງຈິດສໍານຶກ ໃຫ້ແກ່ຊາວບ້ານແລ້ວ ຍັງເປັນການຊ່ວຍເຮັດໃຫ້ໂຄງການມີຄວາມ ຍືນຍົງອີກດ້ວຍ ເນື່ອງຈາກວ່າມັນເປັນສິ່ງກະຕຸກຊຸກຍູ້ ໃຫ້ຊາວບ້ານຢຸດຕິວິທີການນໍາໃຊ້ຊັບພະຍາກອນແບບບໍ່ຍືນຍົງ ແລະ ບໍ່ສອດຄ່ອງກັບຈຸດປະສົງ ເປົ້າໝາຍ ດ້ານການອະນຸລັກ ແລະ ການປົກປັກຮັກສາ ຂອງເຂດສະຫງວນ. ພ້ອມດຽວກັນນີ້ ທາງຄະນະກໍາມະການ ຍັງໄດ້ຄົ້ນຄວ້າຫາແຫຼ່ງລາຍຮັບອື່ນ ໃຫ້ແກ່ຊາວບ້ານ ແລະ ກໍໄດ້ເອົາໃຈ

ໃສ່ພິຈາລະນາເປັນພິເສດໃນການນໍາເອົາຜົນຂອງການສໍາຫຼວດເສດຖະກິດສັງຄົມ ທີ່ສະເໜີແນະໃຫ້ຊາວບ້ານລົງທຶນເຂົ້າໃນການກະສິກໍາ ເຊັ່ນ ການລ້ຽງປາ ຫຼື ການລ້ຽງເປັດ ເພື່ອປັບປຸງຊີວິດການເປັນຢູ່ ມາຈັດຕັ້ງຜັນຂະຫຍາຍ.

ການສົ່ງເສີມການທ່ອງທ່ຽວທໍາມະຊາດ ເປັນວຽກງານທີ່ມີຄວາມສໍາຄັນທີ່ສຸດ ຕໍ່ຄວາມຄົງຕົວຂອງເຂດສະຫງວນ. ຜົນປະໂຫຍດ ຈາກນັກທ່ອງທ່ຽວທີ່ນັບມື້ນັບເພີ້ມຂື້ນເຊິ່ງຫລັງຈາກເຂົ້າມາທ່ຽວຊົມນົກ ແລ້ວໄປທ່ຽວຊົມ ອັງກໍວັດຕໍ່ ໃນໄລຍະທີ່ພັກຢູ່ ເມືອງສຽມຣຽບນັ້ນ ແມ່ນຈະໄດ້ທັງສອງດ້ານ ຄື (i) ຊາວບ້ານມີຊີວິດການເປັນຢູ່ທີ່ດີຂື້ນ ແລະພ້ອມດຽວ ກໍຢຸດເຊົາການຫາປາ ແລະ ການຂຸດຄົ້ນຊັບພະຍາກອນທໍາມະຊາດແບບທີ່ບໍ່ຍືນຍົງ (ii) ການເຫັນໄດ້ເຖິງຄວາມສໍາຄັນທາງດ້ານລະບົບເວດຂອງຖິ່ນອາໃສ ແລະ ຂອງສັດປ່າໃນເຂດ ແປຣກ ຕວນ ທີ່ສູງຂື້ນ ຈະເປັນສິ່ງກະຕຸກຊຸກຍູ້ໃຫ້ລັດຖະບານ ແລະ ກຸ່ມຜູ້ໃຫ້ທຶນ ໄດ້ເພີ້ມຄວາມເອົາໃຈໃສ່ຫຼາຍຂື້ນ ໃນການອະນຸລັກ ແລະ ປົກປັກຮັກສາສະພາບຖິ່ນອາໃສຂອງສັດໃນເຂດນີ້.

## ວິທີການລົງຢ້ຽມຢາມພາກສະໜາມ

ຜູ້ເຂົ້າຮັບການອົບຮົມ ຈະໄດ້ລົງຢ້ຽມຢາມ ເຂດ ແປຣກ ຕວນ ເພື່ອຮຽນຮູ້ກ່ຽວກັບວຽກງານອະນຸລັກ ແລະ ປົກປັກຮັກສາທີ່ດໍາເນີນຢູ່ໃນເຂດສະຫງວນ ພ້ອມ ວິທີການເອົາຊາວບ້ານເຂົ້າມາຮ່ວມໃນການຄຸ້ມຄອງ. ການລົງຢ້ຽມຢາມພາກສະໜາມນີ້ ຈະເຮັດໃຫ້ຜູ້ເຂົ້າຮ່ວມ ສາມາດສອບຖາມ ຮຽນຮູ້ຕົວຈິງ ກັບຕົວແທນຂອງໜ່ວຍງານຮ່ວມມືທາງວິຊາການ ເພື່ອໃຫ້ເຂົ້າໃຈໄດ້ດີຂື້ນກ່ຽວກັບສິ່ງທ້າທາຍຕ່າງໆ ທີ່ເຂົາເຈົ້າໄດ້ພົບ ແລະຜ່ານຜ່າມາ ໃນການສົ່ງເສີມເຮັດໃຫ້ເກີດມີການຄຸ້ມຄອງແບບຍືນນານໃນເຂດຕົງເລສາບ.

ການລົງພາກສະໜາມຈະໃຊ້ເວລາ 1 ວັນ ໂດຍໃນນັ້ນ ຈະໄດ້ຈັດກັນອອກເປັນຈຸນ້ອຍໆ ແລ້ວກໍານົດໃຫ້ແຕ່ລະຈຸ ສໍາພາດກຸ່ມເປົ້າໝາຍ ແລະ ຫົວຂໍ້ແບບສະເພາະຂອງໃຜມັນ ດັ່ງທີ່ສັງລວມໄວ້ໃນຕາຕະລາງຕໍ່ໄປນີ້:

| ຜູ້ທີ່ຈະສໍາພາດ | ຈຸດເນັ້ນໃນການສໍາພາດ |
|---|---|
| ກຸ່ມຊາວປະມົງ | • ວິທີການຫາປາ (ເຄື່ອງມືຫາປາ, ຊະນິດ ແລະ ຂະໜາດ ຂອງປາທີ່ຈັບ)<br>• ເຂດຫາປາ (ເຂດທົ່ວໄປ, ເຂດສໍາປະທານ)<br>• ຂໍ້ຂັດແຍ່ງກັບຜູ້ຮັບສໍາປະທານ ໃນການນໍາໃຊ້ຊັບພະຍາກອນ<br>• ການຈັດສັນ ຫຼື ແບ່ງປັນ ຊັບພະຍາກອນ<br>• ຄວາມຮູ້ກ່ຽວກັບສະພາບຄວາມສົມບູນຂອງປະຊາກອນປາ<br>• ລາຍຮັບຈາກການຫາປາ |
| ກຸ່ມຜູ້ເກັບໄມ້ຟືນ | • ວິທີການໃນການເກັບໄມ້ຟືນ<br>• ສະຖານທີ່ເກັບ ພ້ອມ ເວລາ<br>• ຊະນິດໄມ້ ແລະ ບໍລິມາດ<br>• ການນໍາໃຊ້ໄມ້ທີ່ເກັບມາ<br>• ຂໍ້ສັງເກດ ການກ່ຽວກັບຜົນກະທົບທີ່ມີຕໍ່ປ່າ<br>• ຄວາມຮູ້ກ່ຽວກັບຜົນກະທົບທີ່ສ້າງຕໍ່ນົກ ເຊິ່ງໃຊ້ປ່າເຂດທີ່ກ່າວເປັນຖິ່ນອາໃສ |
| ນາຍບ້ານ | • ຄຸນນະພາບຊີວິດ<br>• ປະເດັນທາງດ້ານສັງຄົມ ຢູ່ໃນບ້ານ<br>• ວິທີການຄຸ້ມຄອງຊັບພະຍາກອນແບບພື້ນບ້ານ<br>• ແຫຼ່ງລາຍຮັບອື່ນ ນອກຈາກການຫາປາ<br>• ສິນເຊື່ອຈຸລະພາກ ແລະ ແຫ່ງທຶນອື່ນໆ ທີ່ມີໃນພື້ນທີ່ |
| ຕົວແທນໜ່ວຍງານຮ່ວມມືທາງວິຊາການ | • ການຈັດຕັ້ງ ແລະ ລະບຽບການ ໃນການຄຸ້ມຄອງ<br>• ພາລະບົດບາດ ແລະ ໜ້າທີ່ ໃນການຄຸ້ມຄອງ ຂອງບັນດາອົງການລັດ<br>• ການຊໍ້າຊ້ອນກັນໃນເປົ້າໝາຍ ແລະ ຈຸດປະສົງ ຂອງການຄຸ້ມຄອງ |

| | |
|---|---|
| | • ການຮ່ວມມືກັບຜູ້ຮັບສຳປະທານຫາປາ<br>• ການເຂົ້າຮ່ວມຂອງ ຜູ້ໃຫ້ທຶນສາກົນ ແລະ ຂອງ NGO. |
| ພາກສ່ວນທີ່ມີສ່ວນກ່ຽວຂ້ອງກັບການທ່ອງທ່ຽວທຳມະຊາດທັງໝົດ | • ຄາດຄະເນຄວາມຕ້ອງການສຳລັບການທ່ອງທ່ຽວທຳມະຊາດ<br>• ຍຸດທະສາດການຄຸ້ມຄອງ ເພື່ອໃຫ້ມີລາຍຮັບຫຼາຍ<br>• ຂໍ້ແນະນຳກ່ຽວກັບມາດຕະການທີ່ຈະເຮັດໃຫ້ມີຄວາມຄົງຕົວ<br>• ຄາດຄະເນຜົນປະໂຫຍດທີ່ຈະເກີດມີຕໍ່ຊາວບ້ານ<br>• ຜົນກະທົບທາງບວກ ຂອງການທ່ອງທ່ຽວໃນເຂດສະຫງວນ<br>• ຜົນກະທົບທາງລົບທີ່ອາດຈະເກີດຂຶ້ນ ຈາກນັກທ່ອງທ່ຽວ |

ຫຼັງຈາກການລົງພາກສະໜາມສຳເລັດ ຕ້ອງໃຫ້ແຕ່ລະຈຸ ສະເໜີຜົນການສຶກສາຂອງຕົນຕໍ່ທັງໝົດກຸ່ມ ໂດຍໃນນັ້ນ ໃຫ້ເນັ້ນໃສ່ການສະເໜີບົດຮຽນຕົວຈິງທີ່ຮຽນຮູ້ ແລະ ເກັບກຳໄດ້ ເພື່ອເສີມຂະຫຍາຍເຮັດໃຫ້ທິດສະດີ ການຄຸ້ມຄອງແບບຍືນຍົງ ແລະ ທິດສະດີການຄຸ້ມຄອງຊັບພະຍາກອນ ແລະ ສິ່ງແວດລ້ອມ ແບບປະສົມປະສານ ທີ່ໄດ້ນຳມາສິດສອນນັ້ນ ມີຄວາມສົມບູນຂຶ້ນໆເລື້ອຍ.

# ບົດຮຽນທີ່ສາມາດນຳໄປໝູນໃຊ້

ບົດຮຽນ ທີ່ຄາດວ່າຜູ້ເຂົ້າຮັບການອົບຮົມ ຈະໄດ້ຮັບ ພາຍຫຼັງການຮຽນ ກ່ຽວກັບກໍລະນີສຶກສາ ແລະ ການລົງພາກສະໜາມ ອາດຈະລວມມີ:

1. ຄວາມຮູ້ພື້ນບ້ານດ້ານນິເວດວິທະຍາ ອາດຈະຊ່ວຍໃຫ້ເກີດມີການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງໄດ້ ໃນສະພາບເງື່ອນໄຂທີ່ບໍ່ມີຄວາມກົດດັນ ແຕ່ຊາວບ້ານອາດຈະຖືກບັງຄັບໃຫ້ດຳເນີນການຄຸ້ມຄອງແບບບໍ່ຍືນຍົງໄດ້ ເມື່ອຖືກບີບຮັດທາງດ້ານເສດຖະກິດ ແລະ ຖືກກີດກັ້ນໃນການນຳໃຊ້ຊັບພະຍາກອນ.
2. ການຊຸກຍູ້ສົ່ງເສີມໃຫ້ມີການຄຸ້ມຄອງແບບຍືນຍົງ ມັກຈະບໍ່ປະສົບຜົນສຳເລັດ ຖ້າຫາກຂາດການພິຈາລະນາເຖິງບັນຫາດ້ານຊີວິດການເປັນຢູ່ຂອງຊາວບ້ານ ແລະ ການເອົາເຂົາເຈົ້າເຂົ້າຮ່ວມໃນການວາງແຜນ ແລະ ການຄຸ້ມຄອງ ພ້ອມທັງການມີສ່ວນໄດ້ຮັບຜົນປະໂຫຍດນຳ.
3. ການສຶກສາ ແລະ ການສ້າງຈິດສຳນຶກ ໃຫ້ຊາວບ້ານ ແລະ ກຸ່ມຜູ້ນຳໃຊ້ຊັບພະຍາກອນອື່ນໆ ເປັນວຽກທີ່ຈຳເປັນ ສຳລັບການຫຼຸດຜ່ອນ ການນຳໃຊ້ຊັບພະຍາກອນແບບບໍ່ຍືນຍົງ.
4. ຕ້ອງມີການດຳເນີນການສຶກສາຄົ້ນຄວ້າໃຫ້ຫຼາຍຂຶ້ນຕື່ມ ເພື່ອເພີ່ມພູນຄວາມຮູ້ໃຫ້ຫຼາຍຂຶ້ນ ສຳລັບເປັນສິ່ງສະໜັບສະໜູນການຄຸ້ມຄອງແບບຍືນຍົງ.
5. ການປັບປຸງການຈັດຕັ້ງ ແລະ ລະບຽບການ ເປັນວຽກທີ່ຈຳເປັນສຳລັບສະໜັບສະໜູນ ຂະບວນການຄຸ້ມຄອງແບບຍືນຍົງ ທີ່ໄດ້ລິເລີ່ມຂຶ້ນ ເພື່ອບໍ່ໃຫ້ມີການຊ້ຳຊ້ອນກັນໃນດ້ານບົດບາດ ຄວາມຮັບຜິດຊອບ ຂອງບັນດາອົງການລັດ ແລະກໍເພື່ອປະຕິຮູບໂຄງຮ່າງການຈັດຕັ້ງ ທີ່ຈະນຳໄປສູ່ການຄຸ້ມຄອງແບບບໍ່ຍືນຍົງ (ເຊັ່ນ: ການກຳນົດເປັນເຂດສຳປະທານການຫາປາ ໃນຕົງເລສາບ)

# ເອກະສານອ້າງອີງ


Goes, F., H. Chamnan, S. Mean, L. Kent and M. Rethy. 1998. Waterbird Counting and Survey at Prek Toal. Tonle Sap Technical Coordination Unit. Cambodian Ministry of Environment.

TCU. 1998. Project Proposal for Tonle Sap Biosphere Reserve. Technical Coordination Unit for the Tonly Sap. Cambodian Ministry of Environment.

TCU. 1996. Strategy and Action Plan for the Protection of the Tonle Sap. The Technical Coordination Unit for the Tonle Sap. Cambodian Ministry of Environment

# ຮູບປະກອບ

<u>FIGURE I : Tonle Sap Biosphere Reserve</u>



PREK TOAL CORE AREA (TONLE SAP BIOSPHERE RESERVE) : LOCATION OF WATERBIRD COLONIES 1998

05->07/98.

